ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

*******

ທະນາຄານແຫ່ງ ສ.ປ.ປ. ລາວ ເລກທີ 927 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 20 SEP 2012

**ຂໍ້ຕົກລົງ**

**ວ່າດ້ວຍຄ່າສະມາຊິກ ແລະ ຄ່າລິການຂໍ້ມູນຂ່າວສານສິນເຊື່ອ**

- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊລົງວັນທີ 14 ຕຸລາ 1999;
- ອີງຕາມ ກົດໝາຍວ່າດ້ວຍທະນາຄານທຸລະກິດ ສະບັບເລກທີ 03/ສພຊ, ລົງວັນທີ 26 ທັນວາ 2006;
- ອີງຕາມ ການສະເໜີຂອງກົມຄຸ້ມຄອງທະນາຄານທຸລະກິດ ສະບັບເລກທີ 122/ກຄທ, ລົງວັນທີ 30/07/2012.

**ຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ອອກຂໍ້ຕົກລົງ:**

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດລະບຽບຫຼັກການ ໃນການເກັບຄ່າສະມາຊິກ ແລະ ຄ່າບໍລິການຂໍ້ມູນຂ່າວສານສິນເຊື່ອ ຂອງ ສຂສ ເພື່ອເປັນບ່ອນອີງໃຫ້ແກ່ທະນາຄານທຸລະກິດ ແລະ ສະຖາບັນການເງິນ ທີ່ເປັນສະມາຊິກຂອງ ສຂສ ປະຕິບັດໃຫ້ມີຄວາມເປັນເອກະພາບ.

**ມາດຕາ 2. ຄ່າເຂົ້າເປັນສະມາຊິກ, ຄ່າບຳລຸງຮັກສາ ແລະ ຄ່າບໍລິການ**

**2.1. ຄ່າເຂົ້າເປັນສະມາຊິກ**

ທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ເຂົ້າເປັນສະມາຊິກຂອງ ສຂສ ຕ້ອງຈ່າຍຄ່າສະມາຊິກ 5.000.000 ກີບ (ຫ້າລ້ານກີບຖ້ວນ) ພາຍໃນ 7 ວັນ ພາຍຫຼັງທີ່ໄດ້ຮັບອະນຸຍາດຈາກທະນາຄານ ແຫ່ງ ສປປ ລາວ ໃຫ້ເຂົ້າເປັນສະມາຊິກ.

**2.2 ຄ່າບຳລຸງຮັກສາ**

ສະມາຊິກຂອງ ສຂສ ຈະຕ້ອງຈ່າຍຄ່າບຳລຸງຮັກສາປະຈຳປີໃຫ້ແກ່ ທະນາຄານ ແຫ່ງ ສປປ ລາວ ປີລະ 2.000.000 ກີບ (ສອງລ້ານກີບຖ້ວນ).

**2.3 ຄ່າບໍລິການຂໍ້ມູນຂ່າວສານສິນເຊື່ອ**

**2.3.1** ສະມາຊິກ ສຂສ ຈະຕ້ອງຈ່າຍຄ່າບໍລິການຂໍ້ມູນຂ່າວສານສິນເຊື້ອ ຄືດັ່ງນີ້:

- ການເຂົ້າຄົ້ນຫາຂໍ້ມູນສິນເຊື່ອ ຂອງລູກຄ້າທີ່ມີຂໍ້ມູນໃນລະບົບ ຕ້ອງຈ່າຍຄ່າບໍລິການ 50.000 ກີບ (ຫ້າສິບພັນກີບຖ້ວນ) ຕໍ່ຄັ້ງຕໍ່ລາຍ;
- ການເຂົ້າຄົ້ນຫາຂໍ້ມູນສິນເຊື່ອຂອງລູກຄ້າໃນລະບົບ ແຕ່ບໍ່ພົບຂໍ້ມູນຂອງລູກຄ້າຕ້ອງ ຈ່າຍຄ່າບໍລິການ 20.000 ກີບ (ຊາວພັນກີບຖ້ວນ) ຕໍ່ຄັ້ງຕໍ່ລາຍ;

**2.3.2** ບຸກຄົນ ຫຼື ນິຕິບຸກຄົນ ທີ່ບໍ່ແມ່ນ ສະມາຊິກ ຂອງ ສຂສ ທີ່ຕ້ອງການໃຫ້ ສຂສ ສະໜອງຂໍ້ມູນປະຫວັດການເຄື່ອນໄຫວສິນເຊື່ອ ຫຼື ຢັ້ງຢືນໜີ້ສິນຂອງຕົນເອງ ຕ້ອງຈ່າຍຄ່າບໍລິ ການ ດັ່ງນີ້:

- ສຳລັບບຸກຄົນ ຕ້ອງຈ່າຍຄ່າບໍລິການ 50.000 ກີບ (ຫ້າສິບພັນກີບຖ້ວນ) ຕໍ່ຄັ້ງຕໍ່ ລາຍ;
- ສຳລັບນິຕິບຸກຄົນ ຕ້ອງຈ່າຍຄ່າບໍລິການ 100.000 ກີບ (ໜຶ່ງແສນກີບຖ້ວນ) ຕໍ່ຄັ້ງຕໍ່ ລາຍ;

**2.3.3** ບຸກຄົນ ຫຼື ນິຕິບຸກຄົນ ທີ່ບໍ່ແມ່ນ ສະມາຊິກ ຂອງ ສຂສ ຫາກຕ້ອງການຂໍ້ມູນຂ່າວສານ ສິນເຊື່ອຂອງບຸກຄົນ ຫຼື ນິຕິບຸກຄົນອື່ນ ຕ້ອງຈ່າຍຄ່າບໍລິການຄືດັ່ງນີ້:

- ສຳລັບບຸກຄົນ ຕ້ອງຈ່າຍຄ່າບໍລິການ 80.000 ກີບ (ແປດສິບພັນກີບຖ້ວນ) ຕໍ່ຄັ້ງຕໍ່ ລາຍ;
- ສຳລັບນິຕິບຸກຄົນ ຕ້ອງຈ່າຍຄ່າບໍລິການ 150.000 ກີບ (ໜຶ່ງຮ້ອຍຫ້າສິບພັນກີບ ຖ້ວນ) ຕໍ່ຄັ້ງຕໍ່ລາຍ.

**ມາດຕາ 3. ການຊຳລະຄ່າບຳລຸງຮັກສາ ແລະ ຄ່າບໍລິການ**

**3.1** ສະມາຊິກ ຂອງ ສຂສ ຕ້ອງຊໍາລະຄ່າບໍາລຸງຮັກສາໃນແຕ່ລະປີ ຊ້າສຸດບໍ່ໃຫ້ກາຍ ວັນທີ 15 ມັງກອນຂອງແຕ່ລະປີ ໂດຍໂອນເງິນເຂົ້າບັນຊີລາຍຮັບຂອງ ທະນາຄານ ແຫ່ງ ສປປ ລາວ;

**3.2** ສະມາຊິກ ຂອງ ສຂສ ຕ້ອງຊໍາລະຄ່າບໍລິການໃນແຕ່ລະເດືອນຊ້າສຸດບໍ່ໃຫ້ກາຍວັນທີ 05 ຂອງເດືອນຕໍ່ມາ.

ກໍລະນີກາຍກໍານົດເວລາຊໍາລະທີ່ໄດ້ກໍານົດໃນຂໍ້ 3.1 ແລະ ຂໍ້ 3.2 ຂ້າງເທິງ ສຂສ ຈະຕັດເງິນ ຈາກບັນຊີເງິນຝາກກະແສລາຍວັນຂອງສະມາຊິກທີ່ຝາກໄວ້ຢູ່ທະນາຄານແຫ່ງ ສປປ ລາວ ແລະ ຈະແຈ້ງ ໃຫ້ສະມາຊິກ ຊາບຕາມພາຍຫຼັງ.

**ມາດຕາ 4. ການຈັດຕັ້ງປະຕິບັດ**

ມອບໃຫ້ ສຂສ ທະນາຄານແຫ່ງ ສປປ ລາວ, ສະມາຊິກຂອງ ສຂສ ແລະ ກົມກ່ຽວຂ້ອງຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ

**ມາດຕາ 5. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ທຸກຂໍ້ກໍານົດ, ກົດລະບຽບກ່ຽວກັບວຽກງານຂໍ້ມູນຂ່າວສານສິນເຊື່ອທີ່ປະກາດໃຊ້ໃນເມືອກ່ອນ ຫາກຂັດກັບຂໍ້ຕົກລົງ ສະບັບນີ້ລ້ວນແຕ່ຖືກຍົກເລີກ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

**ສົມພາວ ໄຟສິດ**